ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

# BCEL ຊ່ວຍເຫຼືອ 2 ແຂວງພາກກາງ ແລະ 4 ແຂວງພາກໃຕ້ທີ່ປະສົບໄພນໍ້າຖ້ວມ
# ມູນຄ່າ 600 ລ້ານກີບ
# ປະກອບສ່ວນໃນການສ້າງຂະບວນການຮັກຊາດ!




ຄະນະຜູ້ບໍລິຫານແລະພະນັກງານ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ ຫຼື BCEL) ຊຸກຍູ້ຂະບວນການຮັກຊາດ ເພື່ອເປັນການຊ່ວຍເຫຼືອບັນເທົາທຸກເບື້ອງຕົ້ນແກ່ຄອບຄົວທີ່ຖືກຜົນກະທົບຈາກໄພນໍ້າຖ້ວມໃນຕົ້ນເດືອນກັນຍາ 2019 ທີ່ຜ່ານມາຢູ່ 2 ແຂວງພາກກາງ ແລະ 4 ແຂວງພາກໃຕ້ ໂດຍການມອບເຂົ້າສານຊ່ວຍເຫຼືອຈຳນວນ 73 ໂຕນກວ່າ ມູນຄ່າ 600 ລ້ານກີບ ອະນຸມັດໂດຍ ຄະນະຜູ້ບໍລິຫານ ທຄຕລ ເຊິ່ງຕາງໜ້າມອບໂດຍຫົວໜ້າສາຂາ ທຄຕລ ຂອງແຕ່ລະສາຂາ.

ໃນລະຫວ່າງວັນທີ17-19 ກັນຍາ 2019 ນີ້ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຕາງໜ້າໂດຍສາຂາຄຳມ່ວນ, ສາຂາສະຫວັນນະເຂດ, ສາຂາສາລາວັນ, ສາຂາອັດຕະປື, ສາຂາເຊກອງ ແລະ ສາຂາຈຳປາສັກ ນຳພາໂດຍຫົວໜ້າ ທຄຕລ ຂອງແຕ່ລະສາຂາໄດ້ລົງມອບເຂົ້າສານເພື່ອຊ່ວຍເຫຼືອ 2 ແຂວງພາກກາງ ແລະ 4 ແຂວງພາກໃຕ້ ທີ່ຖືກຜົນກະທົບໄພນໍ້າຖ້ວມ ຈຳນວນເຂົ້າສານ 73 ໂຕນກວ່າ ມູນຄ່າ 600 ລ້ານກີບ ເພື່ອເປັນການສະແດງຄວາມຫ່ວງໃຍ ແລະ ນໍ້າໃຈຂອງຄະນະຜູ້ບໍລິຫານ ແລະ ພະນັກງານ ທຄຕລ ຕໍ່ເຫດການໄພນໍ້າຖ້ວມທີ່ 2 ແຂວງພາກກາງ ແລະ 4 ແຂວງພາກໃຕ້ຂອງລາວ ທັງນີ້, ກໍເພື່ອເປັນການບັນເທົາທຸກໃນຂັ້ນເບື້ອງຕົ້ນ.

ການຊ່ວຍເຫຼືອໃນຄັ້ງນີ້ແມ່ນໄດ້ມອບເຂົ້າສານໃຫ້ກັບ 6 ແຂວງ ປະກອບມີ ແຂວງ ຄຳມ່ວນ 8 ໂຕນ ມູນຄ່າ 65,6 ລ້ານກີບ, ແຂວງສະຫວັນນະເຂດ 20 ໂຕນ ມູນຄ່າ 164 ລ້ານ ກີບ, ແຂວງສາລະວັນ 20 ໂຕນ ມູນຄ່າ 164 ລ້ານ ກີບ, ແຂວງອັດຕະປື 5,17 ໂຕນ ມູນຄ່າ 42,39 ລ້ານກີບ, ແຂວງເຊກອງ 10 ໂຕນ ມູນຄ່າ 82 ລ້ານກີບ ແລະ ແຂວງຈຳປາສັກ 10 ໂຕນ ມູນຄ່າ 82 ລ້ານກີບ ***ລວມມູນຄ່າການຊ່ວຍເຫຼືອທັງໝົດໃນຄັ້ງນີ້ແມ່ນ 600 ລ້ານກີບ.*** ໂດຍທັງ 6 ແຂວງ ກໍ່ໄດ້ຈັດພິທີມອບ-ຮັບຢ່າງອົບອຸ່ນ ເຊິ່ງໄດ້ມອບໂດຍຫົວໜ້າ ທຄຕລ ແຕ່ລະສາຂາ ແລະ ຮັບໂດຍອຳນາດການປົກຄອງຂັ້ນແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງຂອງແຕ່ລະແຂວງ. ໃນພິທີມອບນັ້ນ; ອຳນາດການປົກຄອງຂອງທັງ 6 ແຂວງ ກໍ່ໄດ້ກ່າວສະແດງຂອບໃຈຢ່າງສູງຕໍ່ຄະນະຜູ້ບໍລິຫານແລະພະນັກງານ ທຄຕລ ເພາະເຂົ້າສານຈຳນວນຫຼາຍແມ່ນຈຳເປັນທີ່ສຸດເພື່ອມາທົດແທນເຫດການໄພພິບັດດັ່ງກ່າວ ແລະ ໃຫ້ຄຳໝັ້ນສັນຍາວ່າຈະນຳເອົາເຄື່ອງຊ່ວຍເຫຼືອນີ້ໃຫ້ໄປຮອດມືປະຊາຊົນຢ່າງເໝາະສົມໂດຍໄວທີ່ສຸດເພື່ອໃຫ້ຜູ້ຮັບຄວາມເສຍຫາຍໄດ້ຮັບປະໂຫຍດທັນສະພາບການ.

ທຄຕລ ຂໍສະແດງຄວາມເສຍໃຈຕໍ່ເຫດການໄພນ້ຳຖ້ວມໃນ 2 ແຂວງພາກກາງ ແລະ 4 ແຂວງພາກໃຕ້ ຈາກເຫດການຝົນຕົກແຮງຕັ້ງແຕ່ຕົ້ນອາທິດຂອງເດືອນກັນຍາທີ່ຜ່ານມາ ຂໍສົ່ງກຳລັງໃຈເຖິງຄອບຄົວຜູ້ໄດ້ຮັບຜົນກະທົບ ແລະ ຫວັງວ່າການຊ່ວຍໃນຄັ້ງນີ້ຈະເປັນການສົ່ງກຳລັງໃຈ ແລະ ຊ່ວຍບັນເທົາທຸກໃຫ້ແກ່ຜູ້ທີ່ໄດ້ຮັບຜົນກະທົບ.

ນອກຈາກການຊ່ວຍເຫຼືອດັ່ງກ່າວແລ້ວ ປະຈຸບັນ ທຄຕລ ກໍ່ຍັງລະດົມທຶນຈາກພະນັກງານ ທຄຕລ ທົ່ວລະບົບເພື່ອຊ່ວຍເຫຼືອຕື່ມອີກ. ພ້ອມດຽວກັນນັ້ນ, ກໍ່ໄດ້ເປີດໂຄງການ BCEL OneHeart ເພື່ອຊ່ວຍເຫຼືອຜູ້ປະສົບໄພນ້ຳຖ້ວມຂອງທັງ 6 ແຂວງ ເຊິ່ງລູກຄ້າ ທຄຕລ ແລະ ປະຊາຊົນລາວທີ່ມີ BCEL One ສາມາດຮ່ວມບໍລິຈາກໄດ້ ໂດຍໄດ້ແຍກໂຄງການຊ່ວຍເຫຼືອເປັນແຕ່ລະສາຂາຂອງ ທຄຕລ ພາຍໃນແຂວງ ລາຍລະອຽດສາມາດເຂົ້າເບິ່ງໄດ້ຜ່ານເວັບໄຊທ໌ www.oneheart.la



ຮູບພາບ: ການມອບເຂົ້າສານໃຫ້ແກ່ຜູ້ໄດ້ຮັບຜົນກະທົບຈາກໄພນ້ຳຖ້ວມ 2 ແຂວງພາກກາງ ແລະ 4 ແຂວງພາກໃຕ້ມອບໂດຍຕາງໜ້າ ທຄຕລ ແລະ ຮັບໂດຍອຳນາດການປົກຄອງຂັ້ນແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງຂອງແຕ່ລະແຂວງ.

## ຈາກໃຈເຖິງໃຈ! ທຄຕລ ຂໍສົ່ງແຮງໃຈເຖິງຜູ້ໄດ້ຮັບຜົນກະທົບຈາກໄພນ້ຳຖ້ວມ 2 ແຂວງພາກກາງ ແລະ 4 ແຂວງພາກໃຕ້

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
ທັນສະໄໝ ວ່ອງໄວ ໝັ້ນໃຈ
Facebook: BCEL Bank, Website: www.bcel.com.la

ຂຽນຂ່າວໂດຍ: ນາງ ສຸກສາຄອນ ບຸນສະຫວັດທິພັນ (MKT)